**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

**ນະຄອນຫຼວງວຽງຈັນ**

**ຄະນະສະເພາະກິດ**

ເລກທີ 014 /ສພກ.ນວ

ວັນທີ 19 ມິຖຸນາ 2021

# ແຈ້ງການ

## ວ່າດ້ວຍການຈັດຕັ້ງປະຕິບັດຄຳສັ່ງ ວ່າດ້ວຍການເພີ່ມທະວີມາດຕະການປ້ອງກັນ ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດຂອງພະຍາດ COVID -19 ຢູ່ນະຄອນຫຼວງວຽງຈັນ ໄລຍະວັນທີ 20 ມິຖຸນາ - 04 ກໍລະກົດ 2021

**ຮຽນ**: - ຫົວໜ້າກອງບັນຊາການທະຫານ, ກອງບັນຊາການປ້ອງກັນຄວາມສະຫງົບ, ພະແນກການ, ອົງການທຽບເທົ່າພະແນກ ນະຄອນຫຼວງວຽງຈັນ;

- ເຈົ້າເມືອງ ແລະ ນາຍບ້ານ ທົ່ວນະຄອນຫຼວງວຽງຈັນ;
- ພະນັກງານ, ລັດຖະກອນ, ທະຫານ, ຕຳຫຼວດ, ກຳມະກອນ, ນັກຮຽນ, ນັກສຶກສາ, ຜູ້ປະກອບການ, ປະຊາຊົນລາວ, ຊາວຕ່າງດ້າວ, ຜູ້ບໍ່ມີສັນຊາດ ແລະ ຊາວຕ່າງປະເທດ ທີ່ດຳລົງຊີວິດຢູ່ ນະຄອນຫຼວງວຽງຈັນ.

- ອີງຕາມ ຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021, ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 595/ຫສນຍ, ລົງວັນທີ 04 ມິຖຸນາ 2021, ເລກທີ 671/ຫສນຍ, ລົງວັນທີ 19 ມິຖຸນາ 2021 ກ່ຽວກັບການສືບຕໍ່ປະຕິບັດມາດຕະການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ໄລຍະວັນທີ 20 ມິຖຸນາ - 04 ກໍລະກົດ 2021;
- ອີງຕາມ ຂໍ້ຕົກລົງຂອງເຈົ້າຄອງນະຄອນຫຼວງວຽງຈັນ ວ່າດ້ວຍການແຕ່ງຕັ້ງຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ສະບັບເລກທີ 313/ຈນວ, ລົງວັນທີ 21 ພຶດສະພາ 2021;
- ອີງຕາມການຊີ້ນຳຂອງທ່ານເຈົ້າຄອງນະຄອນຫຼວງວຽງຈັນ ໃນວັນທີ 19 ມິຖຸນາ 2021.

ຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດພະຍາດ COVID-19 ນະຄອນຫຼວງວຽງຈັນ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ຜ່ານການຈັດຕັ້ງປະຕິບັດມາດຕະການຕ່າງໆ ຕາມຄຳສັ່ງ ຂອງນາຍົກລັດຖະມົນຕີ, ບັນດາຂະແໜງການຂັ້ນສູນກາງ ແລະ ນະຄອນຫຼວງວາງອອກ ໃນໄລຍະຜ່ານມາ ເຫັນວ່າການລະບາດຂອງພະຍາດ COVID-19 ສາມາດຄວບຄຸມໄດ້ໃນລະດັບທີ່ແນ່ນອນ, ແຕ່ກໍ່ຍັງມີຄວາມສ່ຽງຢູ່ ຍ້ອນວ່າຍັງມີຜູ້ຕິດເຊື້ອຢູ່ໃນຊຸມຊົນ ແລະ ການປະຕິບັດມາດຕະການທີ່ຄະນະສະເພາະກິດວາງອອກ ບໍ່ເຂັ້ມງວດ; ດັ່ງນັ້ນ, ເພື່ອບັນລຸຄາດໝາຍເຮັດໃຫ້ມີຜູ້ຕິດເຊື້ອໜ້ອຍທີ່ສຸດ, ບໍ່ມີຜູ້ເສຍຊີວິດເພີ່ມ, ສິ່ງຜົນກະທົບຕໍ່ເສດຖະກິດ-ສັງຄົມໜ້ອຍທີ່ສຸດ ແລະ ໃຫ້ຊາວນະຄອນຫຼວງວຽງຈັນ ຫັນໄປສູ່ການດຳລົງຊີວິດແບບປົກກະຕິໃໝ່ (NEW NORMAL). ຄະນະສະເພາະກິດ ນະຄອນຫຼວງວຽງຈັນ ຈຳເປັນໃຫ້ສືບຕໍ່ປະຕິບັດມາດຕະການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການແຜ່ລະບາດຂອງພະຍາດ COVID-19 ຢູ່ນະຄອນຫຼວງວຽງຈັນ ອອກໄປຕື່ມອີກ 15 ວັນ, ເລີ່ມແຕ່ເວລາ 00:00 ໂມງ ຂອງວັນທີ 20 ມິຖຸນາ ຫາ ເວລາ 24:00 ໂມງ ຂອງວັນທີ 04 ກໍລະກົດ 2021 ຢ່າງເຂັ້ມງວດ ແລະ ເດັດຂາດ ດັ່ງລຸ່ມນີ້:

1. ເອົາໃຈໃສ່ຈັດຕັ້ງປະຕິບັດມາດຕະການ ທີ່ໄດ້ລະບຸໄວ້ໃນຄຳສັ່ງ ເລກທີ 15/ນຍ, ແຈ້ງການ ເລກທີ 595/ຫສນຍ, ບັນດາຄຳແນະນຳຂອງຄະນະສະເພາະກິດ ຂັ້ນສູນກາງ, ນະຄອນຫຼວງວຽງຈັນ ໂດຍສະເພາະແຈ້ງການສະບັບໃໝ່ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເລກທີ 671/ຫສນຍ, ລົງວັນທີ 19 ມິຖຸນາ 2021 ຢ່າງເຂັ້ມງວດ ແລະ ເດັດຂາດ;

**2.** ໃຫ້ມີຄວາມເອກະພາບກັນ ໃນການປະຕິບັດບາງມາດຕະການ ຂອງແຈ້ງການເລກທີ 671/ຫສນຍ ຄື:

**2.1.** ຊອກຫາຜູ້ຕິດເຊື້ອມາປິ່ນປົວ ແລະ ຊອກຫາຜູ້ສໍາຜັດໃກ້ຊິດກັບຜູ້ຕິດເຊື້ອມາເກັບຕົວຢ່າງ, ຈໍາກັດບໍລິເວນໃຫ້ໄວ ແລະ ສັກວັກຊີນ ໃຫ້ບັນລຸຕາມຄາດໝາຍ;

**2.2.** ການເປີດຮ້ານຕັດຜົມ ແມ່ນໃຫ້ບໍລິການສະເພາະຕັດຜົມ, ສະຜົມ, ຍ້ອມຜົມ, ແຕ່ຫ້າມບໍລິການນວດໜ້າ, ແຖໜວດ ແລະ ຄວັດຫູ. ຊ່າງຕັດຜົມ ແລະ ຜູ້ໃຊ້ບໍລິການ ຕ້ອງປະຕິບັດມາດຕະການປ້ອງກັນການຕິດເຊື້ອ ແລະ ແຜ່ເຊື້ອ ຢ່າງເຂັ້ມງວດ;

**2.3.** ການເປີດຮ້ານເສີມສວຍ ແມ່ນໃຫ້ບໍລິການສະເພາະສະຜົມ, ຕັດແຕ່ງຜົມ, ຕັດແຕ່ງເລັບ. ແຕ່ຫ້າມບໍລິການນວດໜ້າ, ແຕ່ງຄິ້ວ, ຄວັດຫູ; ຊ່າງເສີມສວຍ ແລະ ຜູ້ໃຊ້ບໍລິການ ຕ້ອງປະຕິບັດມາດຕະການປ້ອງກັນການຕິດເຊື້ອ ແລະ ແຜ່ເຊື້ອ ຢ່າງເຂັ້ມງວດ;

**2.4.** ການເປີດຕະຫຼາດກາງຄືນຢູ່ເຂດສວນເຈົ້າອານຸວົງ ແລະ ຢູ່ເຂດອື່ນໆ ແມ່ນບໍ່ໃຫ້ກາຍ 22:00 ໂມງ, ຫ້າມຂາຍເຄື່ອງຢູ່ຕາມແຄມທາງລົດ, ທາງຄົນຍ່າງ, ຫ້າມຂາຍ ແລະ ນັ່ງດື່ມເຄື່ອງດື່ມທີ່ມີທາດເຫຼົ້າ ຢ່າງເດັດຂາດ;

**2.5.** ການຍ່າງອອກກໍາລັງກາຍ ຢູ່ສະຖານທີ່ຕ່າງໆເຊັ່ນ: ສະໜາມຫຼວງ, ບຶງທາດຫຼວງ, ສວນເຈົ້າອານຸວົງ ຕ້ອງໃສ່ຜ້າອັດປາກ-ດັງ, ຮັກສາໄລຍະຫ່າງ 1 ແມັດ ຂຶ້ນໄປ, ຫ້າມຕັ້ງວົງຊຸມແຊວ ຫຼື ດື່ມເຄື່ອງດື່ມທີ່ມີທາດເຫຼົ້າ, ສະເພາະຢູ່ສະໜາມຫຼວງ ແມ່ນຫ້າມຂາຍເຄື່ອງທຸກຊະນິດ ຢ່າງເດັດຂາດ;

**2.6.** ບໍ່ອານຸຍາດໃຫ້ເປີດສະຖານທີ່ທ່ອງທ່ຽວ ແລະ ສວນອາຫານ ຍ້ອນຍັງມີການລະບາດໃນຊຸມຊົນ;

**2.7.** **ການເດີນທາງເຂົ້າ-ອອກ** ນະຄອນຫຼວງວຽງຈັນ ຕ້ອງໄດ້ຮັບອານຸຍາດ ຈາກຄະນະສະເພາະກິດສູນກາງ, ກະຊວງ-ອົງການທຽບເທົ່າ, ນະຄອນຫຼວງວຽງຈັນ, ແຂວງ ແລະ ພະແນກສາທາລະນະສຸກ ນະຄອນຫຼວງວຽງຈັນ, ແຂວງ ຍົກເວັ້ນ: ❶ ຂະບວນລົດຜູ້ນໍາ, ລົດສະຫຼາມ, ລົດສົ່ງຄົນເຈັບ, ລົດກູ້ໄພ, ລົດດັບເພີງ ແລະ ລົດຄະນະສະເພາະກິດ, ລົດຂົນສົ່ງສິນຄ້າ, ຂົນສົ່ງໂຄງການ ແລະ ເຄື່ອງຮັບໃຊ້ການຜະລິດ ບໍ່ຈໍາເປັນຂໍອະນຸຍາດ; ❷ ຜູ້ໄດ້ຮັບວັກຊີນຄົບ 2 ເຂັມ; ❸ ຜູ້ປິ່ນປົວຫາຍດີ ຈະກັບພູມລໍາເນົາ;

**2.8.** ການກໍານົດຂອບເຂດບ້ານແດງ ແມ່ນໃຫ້ຖືເອົາຮ່ອມ, ໜ່ວຍ 10 ຫຼັງຄາເຮືອນເປັນຫຼັກ ແລະ ຫ້າມບຸກຄົນເຂົ້າ-ອອກບ້ານແດງ, ຍົກເວັ້ນຜູ້ທີ່ໄດ້ຮັບອານຸຍາດຈາກອົງການປົກຄອງບ້ານ; ໃຫ້ປ້ອງກັນເວນຍາມ-ລາດຕະເວນຕະຫຼອດ 24 ຊົ່ວໂມງ;

**2.9.** ຫ້າມຈັດງານລ້ຽງສັງສັນ ຫຼື ຊຸມແຊວທຸກຮູບແບບ ຢູ່ທຸກສະຖານທີ່, ຜູ້ທີ່ລະເມີດຈະຖືກປັບໄໝ ຫຼື ດໍາເນີນຄະດີຕາມລະບຽບກົດໝາຍຢ່າງເຂັ້ມງວດ ແລະ ເດັດຂາດ;

**2.10.** ການເປີດຮ້ານອາຫານ, ຮ້ານກາເຟ ທີ່ຢູ່ນອກເຂດ/ບ້ານແດງ ແມ່ນບໍ່ໃຫ້ກາຍ 22:00 ໂມງ ບໍ່ໃຫ້ບໍລິການເຄື່ອງດື່ມທີ່ມີທາດເຫຼົ້າ, ຕ້ອງປະຕິບັດມາດຕະການ ຈັດບ່ອນນັ່ງຫ່າງກັນໃຫ້ໄດ້ 01 ແມັດ, ວັດແທກອຸນຫະພູມ, ລ້າງມືຂ້າເຊື້ອ, ໃສ່ຜ້າອັດປາກ-ດັງ ທັງຜູ້ໃຫ້ບໍລິການ ແລະ ຜູ້ໃຊ້ບໍລິການ ຍົກເວັ້ນເວລາກິນ, ດື່ມ.

**2.11.** ການຈັດກອງປະຊຸມ, ໂຮມຊຸມນຸມ, ຫ້ອງຮັບປະທານອາຫານຫວ່າງ ແມ່ນບໍ່ໃຫ້ມີຜູ້ເຂົ້າຮ່ວມເກີນ 50 ຄົນ, ຕ້ອງຈັດບ່ອນນັ່ງໃຫ້ຫ່າງກັນ 01 ແມັດຂຶ້ນໄປ, ວັດແທກອຸນຫະພູມ, ລ້າງມືຂ້າເຊື້ອ, ໃສ່ຜ້າອັດປາກ-ດັງ;

**2.12.** ການນໍາໃຊ້ເຮືອ ເພື່ອໄປທໍາການຜະລິດຢູ່ດອນ ແລະ ຫາປາຕາມແມ່ນໍ້າຂອງ ໃຫ້ຢູ່ໃນຂອບເຂດເວລາແຕ່ 08:00 ໂມງ ຫາ 18:00 ໂມງ ແລະ ປະຕິບັດລະບຽບການທີ່ໄດ້ກໍານົດໄວ້ ຢ່າງເຂັ້ມງວດ;

**2.13.** ການຂົນສົ່ງໂດຍສານທາງບົກ, ທາງນໍ້າ ແລະ ທາງອາກາດ ຢູ່ໃນນະຄອນຫຼວງວຽງຈັນ, ໄປຕ່າງແຂວງ ຫຼື ຈາກຕ່າງແຂວງເຂົ້າມານະຄອນຫຼວງວຽງຈັນ ຜູ້ຂັບລົດ, ຜູ້ໂດຍສານ ຕ້ອງໄດ້ຮັບວັກຊີນຄົບ 2 ເຂັມ, ຕ້ອງຈັດບ່ອນນັ່ງໃຫ້ຫ່າງກັນ 01 ແມັດ, ວັດແທກອຸນຫະພູມ, ລ້າງມືຂ້າເຊື້ອ, ໃສ່ຜ້າອັດປາກ-ດັງ;

3. **ມາດຕະການຕໍ່ຜູ້ລະເມີດ:**

ບຸກຄົນ ຫຼື ນິຕິບຸກຄົນໃດ ທີ່ລະເມີດມາດຕະການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການແຜ່ລະບາດຂອງພະຍາດ COVID-19 ທີ່ລັດຖະບານ, ຄະນະສະເພາະກິດ, ກະຊວງ - ອົງການ ຂັ້ນສູນກາງ, ນະຄອນຫຼວງວຽງຈັນ ວາງອອກ ແມ່ນຈະຖືກປັບໃໝ ຢ່າງເຂັ້ມງວດ ແລະ ເດັດຂາດ ດັ່ງລຸ່ມນີ້:

- ບຸກຄົນລະເມີດ: ໃຫ້ປັບໃໝ ແຕ່ 500.000 - 3.000.000 ກີບ/ຄົນ/ຄັ້ງ;
- ນິຕິບຸກຄົນລະເມີດ: ໃຫ້ປັບໃໝ ແຕ່ 5.000.000 - 10.000.000 ກີບ/ນິຕິບຸກຄົນ/ຄັ້ງ;

ມອບໃຫ້ກຳລັງ ປກສ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຕິດຕາມກວດກາ ໂດຍເລີ່ມຈາກການສຶກສາອົບຮົມ, ປັບໃໝ, ສັ່ງໂຈະກິດຈະການ ແລະ ກ້າວໄປເຖິງດຳເນີນຄະດີຕາມລະບຽບກົດໝາຍ ຕາມກໍລະນີ ແຕ່ເບົາ ຫາ ໜັກ.

4. ມອບໃຫ້ຄະນະສະເພາະກິດ, ກອງບັນຊາການ ປກຊ-ປກສ, ພະແນກການ - ອົງການທຽບເທົ່າພະແນກ, ອົງການປົກຄອງເມືອງ - ບ້ານ ເພື່ອບັນຊາ, ອຳນວຍຄວບຄຸມ, ອອກລະບຽບການ ແລະ ຄຳແນະນຳລະອຽດ ໃນການຈັດຕັ້ງປະຕິບັດ ເພື່ອຜັນຂະຫຍາຍແຈ້ງການສະບັບນີ້ ໃຫ້ມີຄວາມເຂັ້ມງວດ ແລະ ເດັດຂາດ;

5. ໃຫ້ພະນັກງານ, ລັດຖະກອນ, ທະຫານ, ຕຳຫຼວດ, ກຳມະກອນ, ນັກຮຽນ, ນັກສຶກສາ, ຜູ້ປະກອບການ, ປະຊາຊົນລາວ, ຊາວຕ່າງດ້າວ, ຜູ້ບໍ່ມີສັນຊາດ ແລະ ຊາວຕ່າງປະເທດ ທີ່ດຳລົງຊີວິດຢູ່ ນະຄອນຫຼວງວຽງຈັນ ຈົ່ງໃຫ້ຄວາມຮ່ວມມື ແລະ ປະຕິບັດຕາມແຈ້ງການສະບັບນີ້ ຢ່າງເຂັ້ມງວດ;

ດັ່ງນັ້ນ, ຈຶ່ງໄດ້ແຈ້ງມາຍັງທ່ານ ເພື່ອຊາບ ແລະ ໃຫ້ການຮ່ວມມືໃນການຕັ້ງປະຕິບັດຢ່າງເຂັ້ມງວດ.

**ຮອງເຈົ້າຄອງນະຄອນຫຼວງວຽງຈັນ**
**ຫົວໜ້າຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ**
**ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ນວ**

ພູວົງ ວົງຄຳຊາວ

**ບ່ອນສົ່ງ:**

| | |
|---|---|
| - ເລຂາ, ຮອງເລຂາ, ຄະນະປະຈຳພັກ ນວ ສະຫາຍລະ | 01 ສະບັບ; |
| - ຄະນະສະເພາະກິດ ສູນກາງ | 01 ສະບັບ; |
| - ຫ້ອງວ່າການສູນກາງພັກ | 01 ສະບັບ; |
| - ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ | 01 ສະບັບ; |
| - ຄະນະເລຂາທິການສະພາແຫ່ງຊາດ | 01 ສະບັບ; |
| - ກະຊວງ - ອົງການ ພາກສ່ວນລະ | 01 ສະບັບ; |
| - ຄະນະສະເພາະກິດ ນວ - ເມືອງ ພາກສ່ວນລະ | 01 ສະບັບ; |
| - ພະແນກການ, ອົງການລັດທຽບເທົ່າ ພາກສ່ວນລະ | 01 ສະບັບ; |
| - ເມືອງລະ | 01 ສະບັບ; |
| - ບ້ານລະ | 01 ສະບັບ. |